**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ

ເລກທີ 3159 /ຈຂ

ສະຫວັນນະເຂດ, ວັນທີ 03 ກັນຍາ 2024

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງກອງທຶນໄພພິບັດແຂວງ ສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 68/ ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍການຄຸ້ມຄອງໄພພິບັດ ສະບັບເລກທີ 71/ສພຊ, ລົງວັນທີ 24 ມິຖຸນາ 2019;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງ ກ່ຽວກັບການຮັບຮອງເອົາຂໍ້ຕົກລົງ ຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງກອງທຶນໄພພິບັດແຂວງສະຫວັນນະເຂດ ສະບັບເລກທີ 15/ສພຂ.ສຂ, ລົງວັນທີ 25 ກໍລະກົດ 2024.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ຕິດຕາມ ກວດກາ ແລະ ນໍາໃຊ້ກອງທຶນໄພພິບັດ ແນໃສ່ເຮັດໃຫ້ການເຄື່ອນໄຫວກອງທຶນໄພພິບັດ ໃຫ້ມີຄວາມເອກະພາບ ແລະ ມີປະສິດທິຜົນສູງໃນການຊ່ວຍເຫຼືອສຸກເສີນ, ສ້ອມແປງໂຄງລ່າງພື້ນຖານທີ່ຈໍາເປັນ, ໃນການຊອກຄົ້ນຫາ ແລະ ກູ້ໄພ ເພື່ອເຮັດໃຫ້ຊີວິດການເປັນຢູ່ຜູ້ປະສົບໄພພິບັດ ກັບຄືນສູ່ສະພາບປົກກະຕິ ຫຼື ດີກວ່າເກົ່າ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### ມາດຕາ 2 ການຄຸ້ມຄອງກອງທຶນໄພພິບັດ

ກອງທຶນໄພພິບັດ ແມ່ນກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ແນໃສ່ຮັບປະກັນໃຫ້ມີງົບປະມານພຽງພໍ ແລະ ຍືນຍົງ ເພື່ອນໍາໃຊ້ເຂົ້າໃນການຊ່ວຍເຫຼືອບັນເທົາທຸກຜູ້ທີ່ປະສົບເຄາະຮ້າຍຈາກໄພພິບັດຕ່າງໆເຊັ່ນ: ໄພພິບັດທາງທໍາມະຊາດ ແລະ ໄພພິບັດທີ່ມະນຸດສ້າງຂຶ້ນຢ່າງມີປະສິດທິຜົນ.

ການຄຸ້ມຄອງກອງທຶນໄພພິບັດ ແມ່ນການຄຸ້ມຄອງລາຍຮັບ-ລາຍຈ່າຍ ທີ່ໄດ້ຮັບຈາກການຊ່ວຍເຫຼືອ ເພື່ອຮັບປະກັນໃຫ້ມີຄວາມໂປ່ງໃສ ສາມາດກວດສອບໄດ້ ແລະ ສອດຄ່ອງກັບກົດໝາຍອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 3 ອະທິບາຍສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ໄພພິບັດທໍາມະຊາດໝາຍເຖິງ: ເຫດການ, ປາກົດການ ແລະ ການປ່ຽນແປງທາງທໍາມະຊາດ ເປັນຕົ້ນ: ໄພພິບັດນໍ້າຖ້ວມ, ໄພແຫ້ງແລ້ງ, ພາຍຸ, ແຜ່ນດິນໄຫວ, ດິນເຈື່ອນ, ສັດຕູພືດທໍາລາຍ, ພະຍາດລະບາດ;
2. ໄພພິບັດທີ່ມະນຸດສ້າງຂຶ້ນ ໝາຍເຖິງ: ເຫດການສູກເສີນ ແລະ ອັນຕະລາຍທາງດ້ານສິ່ງແວດລ້ອມ ເນື່ອງຈາກ ການກະທໍາຂອງມະນຸດ ເປັນຕົ້ນ: ອັກຄີໄພ, ໄຟໄໝ້ລາມປ່າ, ຝຸ່ນລະອອງ, ກໍາມັນຕະພາບລັງສີ, ສານເຄມີຮົ່ວໄຫຼ, ລະເບີດຕົກຄ້າງບໍ່ທັນແຕກ, ອຸບປະຕິໄພ;
3. ອັກຄີໄພ ຫຼື ໄຟໄໝ້ ໝາຍເຖິງ: ເຫດການອັນຕະລາຍທີ່ເກີດຈາກໄຟທີ່ຂາດການຄວບຄຸມເບິ່ງແຍງ ແລະ ເກີດການລຸກລາມກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນ;
4. ເຫດການທີ່ເປັນອັນຕະລາຍ ໝາຍເຖິງ: ປະກົດການ ຫຼື ສະຖານທີ່ໃດໜຶ່ງ ທີ່ມີການທໍາລາຍ ຫຼື ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ;
5. ໄພພິບັດຮ້າຍແຮງ ໝາຍເຖິງ: ໄພພິບັດທີ່ເກີດຂຶ້ນຢູ່ພື້ນທີ່ໃດໜຶ່ງ ທີ່ສ້າງຄວາມເສຍຫາຍຕໍ່ສຸຂະພາບ, ຊີວິດ, ຊັບສິນ, ເສດຖະກິດສັງຄົມ ແລະ ສິ່ງແວດລ້ອມເກີນຄວາມສາມາດຮັບມື ຂອງອົງການປົກຄອງຂັ້ນຕ່າງໆ;
6. ຄວາມສ່ຽງໄພພິບັດ ໝາຍເຖິງ: ຄວາມເປັນໄປໄດ້ຂອງເຫດການທີ່ອາດເກີດຂຶ້ນ ຈາກທໍາມະຊາດ ແລະ ມະນຸດສ້າງຂຶ້ນ ທີ່ຈະພາໃຫ້ເກີດຄວາມເສຍຫາຍ;
7. ການຕອບໂຕ້ ໝາຍເຖິງ: ຂະບວນການກະກຽມ, ສ້າງແຜນການ ແລະ ກໍານົດມາດຕະການ ໃນການສະກັດກັ້ນ, ຕອບໂຕ້ເຫດການໄພພິບັດ ເພື່ອຫຼຸດຜ່ອນຄວາມເສຍຫາຍຕ່າງໆ ດ້ວຍການເຝົ້າລະວັງ, ແຈ້ງເຕືອນໄພ, ຄຸ້ມຄອງບັນຊາ, ສັ່ງການ, ຊອກຄົ້ນ, ກູ້ໄພ ແລະ ການຊ່ວຍເຫຼືອເບື້ອງຕົ້ນ;
8. ຂໍ້ມູນດິບ ໝາຍເຖິງ: ຂໍ້ມູນ ແລະ ຖານຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກການສໍາຫຼວດ ແລະ ການລາຍງານທີ່ຍັງບໍ່ທັນຜ່ານການວິເຄາະ, ວິໄຈ ແລະ ພິສູດ;
9. ກອງທຶນໄພພິບັດແຂວງ ຂຽນຫຍໍ້ວ່າ: "ກພຂ";
10. ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນແຂວງແມ່ນບຸກຄົນທີ່ຖືກຕົກລົງແຕ່ງຕັ້ງຈາກທ່ານເຈົ້າແຂວງ ເພື່ອຮັບຜິດຊອບວຽກງານໄພພິບັດໂດຍທ່ານຮອງເຈົ້າແຂວງ ເປັນປະທານ, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຮອງປະທານຜູ້ປະຈໍາການ, ຫົວໜ້າຂະແໜງສັງຄົມສົງເຄາະ ເປັນກອງເລຂາ.

**ມາດຕາ 4 ນະໂຍບາຍຂອງລັດ**

ອົງການປົກຄອງແຂວງ, ເມືອງ-ນະຄອນ ສະໜອງບຸກຄະລາກອນ, ງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ຕາມຄວາມສາມາດ ແລະ ສະໜອງຂໍ້ມູນຂ່າວສານທີ່ຈໍາເປັນເຂົ້າໃນວຽກງານການຄຸ້ມຄອງກອງທຶນໄພພິບັດ.

ຊຸກຍູ້, ສົ່ງເສີມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ມີສ່ວນຮ່ວມໃນການປະກອບສ່ວນທາງດ້ານທຶນຮອນ, ສະຕິປັນຍາ ແລະ ທຸກກໍາລັງແຮງຂອງຕົນເຂົ້າໃນກອງທຶນໄພພິບັດ.

**ມາດຕາ 5 ຫຼັກການ ຄຸ້ມຄອງ ແລະ ນຳໃຊ້**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນໄພພິບັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ທີ່ວາງອອກໃນແຕ່ລະໄລຍະ;
2. ລວມສູນ, ມີຄວາມເປັນເອກະພາບ, ເປີດເຜີຍ;
3. ໃຫ້ການຊ່ວຍເຫຼືອຕອບໂຕ້ໄພພິບັດສຸກເສີນ;
4. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;
5. ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ;
6. ຖືບັນຊີ ລາຍຮັບ-ລາຍຈ່າຍ ຖືກຕ້ອງຕາມກົດໝາຍ ວ່າດ້ວຍການບັນຊີ;
7. ມີການກວດກາ ແລະ ກວດສອບຢ່າງເປັນປົກກະຕິຕາມກົດໝາຍ.

**ມາດຕາ 6 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ນຳໃຊ້ ກອງທຶນໄພພິບັດແຂວງສະຫວັນນະເຂດ.

## ໝວດທີ 2
## ແຫຼ່ງທຶນ ແລະ ການນຳໃຊ້ກອງທຶນ

**ມາດຕາ 7 ແຫຼ່ງລາຍຮັບຂອງກອງທຶນໄພພິບັດ**

ແຫຼ່ງລາຍຮັບຂອງກອງທຶນໄພພິບັດ ຕົ້ນຕໍມີດັ່ງນີ້:

1. ງົບປະມານຂອງລັດຕາມການຈັດສັນງົບປະມານປະຈຳປີ;
2. ການປະກອບສ່ວນຂອງໂຄງການລົງທຶນ, ພາກສ່ວນທຸລະກິດ ແລະ ບຸກຄົນທົ່ວໄປ;
3. ການຊ່ວຍເຫຼືອຂອງອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບຈາກການລະດົມທຶນ;
5. ດອກເບ້ຍເງິນຝາກຂອງກອງທຶນ;
6. ລາຍຮັບອື່ນໆ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 8 ເປົ້າໝາຍການນຳໃຊ້ກອງທຶນໄພພິບັດ**

ກອງທຶນໄພພິບັດນຳໃຊ້ເຂົ້າໃນການຕອບໂຕ້ໄພພິບັດ ເປັນຕົ້ນແມ່ນການຊ່ວຍເຫຼືອສຸກເສີນ, ການສ້ອມແປງໂຄງລ່າງພື້ນຖານທີ່ຈຳເປັນ, ການຊອກຄົ້ນ, ຄົ້ນຫາ ແລະ ກູ້ໄພ ຄື:

1. ການຊ່ວຍເຫຼືອສຸກເສີນ ເປັນຕົ້ນ: ບ່ອນຢູ່ອາໄສຊົ່ວຄາວ, ອາຫານ, ເຂົ້າ, ນ້ຳດື່ມ, ນ້ຳໃຊ້, ການບໍລິການແພດສຸກເສີນ ສູນກັກກັນພະຍາດລະບາດ, ຢາປົວພະຍາດ, ເຄື່ອງມືການແພດ, ເຄື່ອງນຸ່ງຫົ່ມ, ເງິນອຸດໜູນ, ເຄື່ອງໃຊ້ໃນສູນບັນຊາການສຸກເສີນ, ການຈັດສົ່ງ, ສາງເກັບມ້ຽນເຄື່ອງ ແລະ ແຈກຢາຍເຄື່ອງຊ່ວຍເຫຼືອບັນເທົາທຸກສຸກເສີນ;
2. ສ້ອມແປງໂຄງລ່າງພື້ນຖານທີ່ຈຳເປັນ ເພື່ອສາມາດນຳໃຊ້ໃນການຕອບໂຕ້ສຸກເສີນ ເປັນຕົ້ນ: ແມ່ນເສັ້ນທາງ, ຂົວ, ໄຟຟ້າ, ຊົນລະປະທານ, ໂທລະຄົມມະນາຄົມ, ນ້ຳສະອາດ, ສຸຂະອານາໄມ,ໂຮງ

ຮຽນ, ໂຮງໝໍ, ສຸກສາລາ, ຫ້ອງການບ້ານ ແລະ ວັດວາອາຮາມ;

3. ການປະເມີນຜົນເສຍຫາຍ ແລະ ຄວາມຕ້ອງການຮີບດ່ວນເບື້ອງຕົ້ນ, ຈັດຊື້ອຸປະກອນນຳໃຊ້ທີ່ຈຳເປັນໃນການຮັບໃຊ້ວຽກງານສຸກເສີນ ແລະ ວຽກງານກູ້ໄພຊ່ວຍແກ້ໄຂໃນເວລາເກີດໄພພິບັດສຸກເສີນ;
4. ການບໍລິຫານວຽກງານຈຳເປັນ ຂອງສະພາບໍລິຫານກອງທຶນ ໂດຍມີກອງເລຂາຂອງສະພາບໍລິຫານກອງທຶນ ເຮັດໜ້າທີ່ຕາມພາລະບົດບາດ ເພື່ອຈັດເຂົ້າໃນການຈັດກອງປະຊຸມວຽກງານໄພພິບັດ, ເປີດກວ້າງ ປີລະ 2 ຄັ້ງ.

**ມາດຕາ 9 ວິທີການຄິດໄລ່ ລາຍຈ່າຍ ການຕອບໂຕ້ໄພພິບັດສຸກເສີນ**

1. ການຄິດໄລ່ລາຍຈ່າຍຮັບໃຊ້ສິ່ງກໍ່ສ້າງຊົ່ວຄາວ:

ການຄິດໄລ່ລາຍຈ່າຍສິ່ງກໍ່ສ້າງ, ສູບກັກກັນພະຍາດລະບາດ, ຈັດສັນທີ່ພັກຊົ່ວຄາວ, ສາງເກັບມ້ຽນເຄື່ອງ, ຈັດຫາສະຖານທີ່ພັກຊົ່ວຄາວທີ່ປອດໄພ ໃຫ້ມີການຄິດໄລ່ ໂດຍອີງໃສ່ລາຄາກາງຂອງການກໍ່ສ້າງທີ່ຂະແໜງການກ່ຽວຂ້ອງກຳນົດ ຫຼື ລາຄາຕົວຈິງຂອງທ້ອງຕະຫຼາດ ໂດຍແມ່ນກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ເປັນຜູ້ສັງລວມລາຍງານຂໍອະນຸມັດຈາກ ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ແລະ ນຳສະເໜີຕໍ່ສະພາບໍລິຫານກອງທຶນເບີກຈ່າຍ ຫຼື ໂອນເງິນກອງທຶນໄປໃຫ້ຜູ້ບໍລິການ ຫຼື ຜູ້ຮັບເໝົາຕາມມູນຄ່າຕົວຈິງ.

1.1 ການຄິດໄລ່ໃຫ້ການຊ່ວຍເຫຼືອ ບຸກຄົນ ຫຼື ຄອບຄົວ ໃນໄລຍະຕອບໂຕ້ໄພພິບັດສຸກເສີນ:

- ຜູ້ທີ່ຖືກຍົກຍ້າຍໄປຢູ່ເຂດປອດໄພຊົ່ວຄາວ ຫຼື ຕົກຄ້າງຢູ່ເຂດພື້ນທີ່ໄພພິບັດ ນອກຈາກຈະໄດ້ຮັບການຊ່ວຍເຫຼືອ ເປັນເຂົ້າສານ, ອາຫານແຫ້ງ, ນ້ຳດື່ມ, ນ້ຳໃຊ້ທີ່ຈຳເປັນແລ້ວ ຍັງໄດ້ຮັບເງິນ 15.000 ກີບ (ສິບຫ້າພັນກີບ) ຕໍ່ຄົນຕໍ່ມື້ ຈົນກວ່າສະພາບກັບຄືນປົກກະຕິ ຕາມເງື່ອນໄຂຕົວຈິງຂອງງົບປະມານຂອງກອງທຶນໃນແຕ່ລະໄລຍະ;

- ບຸກຄົນທີ່ເສຍຊີວິດຍ້ອນໄພພິບັດທາງທຳມະຊາດ ຈະໄດ້ຮັບການຊ່ວຍເຫຼືອເງິນຊາປານະກິດສົບຈາກກອງທຶນ ຈຳນວນ 1.500.000ກີບ (ໜຶ່ງລ້ານຫ້າແສນກີບ) ຕໍ່ຄົນ.

1.2 ການຄິດໄລ່ລາຍຈ່າຍ ການສ້ອມແປງໂຄງລ່າງພື້ນຖານທີ່ຈຳເປັນ ເພື່ອສາມາດນຳໃຊ້ໄດ້ ໃນການຕອບໂຕ້ສຸກເສີນ ເປັນຕົ້ນ: ເສັ້ນທາງ, ຂົວ, ໄຟຟ້າ, ຊົນລະປະທານ, ໂທລະຄົມມະນາຄົມ, ນ້ຳສະອາດ ສຸຂະອານາໄມ, ໂຮງຮຽນ, ໂຮງໝໍ ແລະ ວັດວາອາຮາມ ໃຫ້ມີແຜນຄິດໄລ່ ໂດຍອີງໃສ່ລາຄາກາງຂອງການກໍ່ສ້າງທີ່ຂະແໜງການກ່ຽວຂ້ອງກຳນົດ ຫຼື ລາຄາຕົວຈິງຂອງທ້ອງຕະຫຼາດ ໂດຍແມ່ນກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ເປັນຜູ້ສັງລວມລາຍງານຂໍອະນຸມັດຈາກ ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ແລະ ນຳສະເໜີຕໍ່ສະພາບໍລິຫານກອງທຶນເບີກຈ່າຍ ຫຼື ໂອນເງິນກອງທຶນໄປໃຫ້ຜູ້ບໍລິການ ຫຼື ຜູ້ຮັບເໝົາຕາມມູນຄ່າຕົວຈິງ;

1.3 ການຄິດໄລ່ລາຍຈ່າຍ ການຈັດຊື້, ລົງປະເມີນຜົນເສຍຫາຍ ແລະ ຄວາມຕ້ອງການຮີບດ່ວນ ໃນໄລຍະຕອບໂຕ້ໄພພິບັດສຸກເສີນ, ການຄິດໄລ່ລາຍຈ່າຍການຈັດຊື້ຢາປົວພະຍາດ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນໃນການຮັບໃຊ້ວຽກງານສຸກເສີນ ແລະ ວຽກງານກູ້ໄພຊ່ວຍແກ້ໄຂໃນເວລາເກີດໄພພິບັດສຸກເສີນໃຫ້ມີແຜນການຄິດໄລ່ ທີ່ອີງໃສ່ການທາບທາມລາຄາຕົວຈິງຂອງທ້ອງຕະຫຼາດ ໂດຍແມ່ນກອງເລຂາຄະນະ

ກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ເປັນຜູ້ສັງລວມລາຍງານ ຂໍອະນຸມັດຈາກ ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ແລະ ນຳສະເໜີຕໍ່ສະພາບໍລິຫານກອງທຶນ ເບີກຈ່າຍ ຫຼື ໂອນເງິນກອງທຶນ ໄປໃຫ້ຜູ້ບໍລິການ ຫຼື ຜູ້ຮັບເໝົາຕາມມູນຄ່າຕົວຈິງ;

2. ການຄິດໄລ່ ໃຫ້ການຊ່ວຍເຫຼືອ ເພື່ອການຟື້ນຟູ ບຸກຄົນ ຫຼື ຄອບຄົວ ທີ່ປະສົບໄພພິບັດ ແລະ ໄດ້ຮັບຜົນເສຍຫາຍດ້ານທີ່ຢູ່ອາໄສ ທີ່ກຳລັງອາໄສຢູ່ ແຕ່ບໍ່ສາມາດອາໄສຢູ່ໄດ້ຈະໄດ້ຮັບການຊ່ວຍເຫຼືອວັດຖຸສິ່ງປຸກສ້າງຄື:

2.1 ຄອບຄົວທີ່ມີຈຳນວນແຕ່ 1-4 ຄົນ ຈະໄດ້ຮັບສັງກະສີ (8 ຟຸດ) 40 ແຜ່ນ ແລະ ເຫຼັກຕະປູ 10 ກິໂລກຼາມ ຫຼື ເບີກຈ່າຍເປັນເງິນຕາມລາຄາຕົວຈິງໃນແຕ່ລະໄລຍະ;

2.2 ຄອບຄົວທີ່ມີຈຳນວນແຕ່ 5-7 ຄົນ ຈະໄດ້ຮັບສັງກະສີ (8 ຟຸດ) 50 ແຜ່ນ ແລະ ເຫຼັກຕະປູ 15 ກິໂລກຼາມ ຫຼື ເບີກຈ່າຍເປັນເງິນຕາມລາຄາຕົວຈິງໃນແຕ່ລະໄລຍະ;

2.3 ຄອບຄົວທີ່ມີຈຳນວນແຕ່ 8 ຄົນ ຂຶ້ນໄປຈະໄດ້ຮັບສັງກະສີ (8 ຟຸດ) 60 ແຜ່ນ ແລະ ເຫຼັກຕະປູ 20 ກິໂລກຼາມ ຫຼື ເບີກຈ່າຍເປັນເງິນຕາມລາຄາຕົວຈິງໃນແຕ່ລະໄລຍະ.

**ມາດຕາ 10 ການຖອນເງິນກອງທຶນ**

ການຖອນເງິນອອກຈາກບັນຊີເງິນຝາກຂອງກອງທຶນ ຕ້ອງຖອນດ້ວຍແຊັກທະນາຄານທີ່ມີສອງ ໃນສາມລາຍເຊັນ ທີ່ໄດ້ມີລາຍເຊັນໄວ້ກັບທະນາຄານ ຈຶ່ງສາມາດຖອນເງິນອອກໄດ້, ການຖອນເງິນອອກຈາກບັນຊີເງິນຝາກຂອງກອງທຶນ ບໍ່ໃຫ້ເກີນ 70% (ເຈັດສິບສ່ວນຮ້ອຍ) ຂອງລາຍຮັບທັງໝົດຂອງກອງທຶນ ໃນແຕ່ລະປີ ແລະ ຕ້ອງໃຫ້ມີເງິນແຮໄວ້ 30% (ສາມສິບສ່ວນຮ້ອຍ) ຂອງກອງທຶນ.

**ມາດຕາ 11 ສິດໃນການສັ່ງຈ່າຍ**

ຜູ້ມີສິດສັ່ງຈ່າຍເງິນກອງທຶນໄພພິບັດມີດັ່ງນີ້:

ແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ຫຼື ຜູ້ຖືກມອບສິດ, ໃນກໍລະນີສຸກເສີນຄະນະກຳມະການຄຸ້ມຄອງໄພພິບັດ ສາມາດສັ່ງຈ່າຍເງິນກອງທຶນໂດຍກົງເຂົ້າໃນການຊ່ວຍເຫຼືອບັນເທົາທຸກສຸກເສີນໃນເວລາເກີດໄພພິບັດ ແຕ່ຕ້ອງລາຍງານຄືນເປັນລາຍລັກອັກສອນໃຫ້ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ພາຍໃນ 24 ຊົ່ວໂມງ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນ

**ມາດຕາ 12 ທີ່ຕັ້ງຂອງກອງທຶນ**

ກອງທຶນໄພພິບັດແຂວງສະຫວັນນະເຂດ ຕັ້ງຢູ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ມີສະພາບໍລິຫານກອງທຶນ ແລະ ກອງເລຂາຂອງກອງທຶນ.

**ມາດຕາ 13 ສະພາບໍລິຫານກອງທຶນ**

ສະພາບໍລິຫານກອງທຶນ ແມ່ນການຈັດຕັ້ງສູງສຸດຂອງກອງທຶນ ຮັບຜິດຊອບເຄື່ອນໄຫວວຽກງານຂອງກອງທຶນ, ສະພາບໍລິຫານກອງທຶນປະກອບດ້ວຍປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງທີ່ມາຈາກຂະແໜງການກ່ຽວຂ້ອງ ທີ່ຖືກແຕ່ງຕັ້ງໂດຍປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ.

**ມາດຕາ 14 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນແຂວງປະກອບດ້ວຍ:**

1. ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນປະທານ
2. ຮອງຫົວໜ້າຫ້ອງວ່າການແຂວງ ເປັນຮອງປະທານ
3. ຮອງຫົວໜ້າພະແນກການເງິນແຂວງ ເປັນກຳມະການ
4. ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ເປັນກຳມະການ
5. ຫົວໜ້າຂະແໜງສັງຄົມສົງເຄາະ ພະແນກ ແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຫົວໜ້າກອງເລຂາ

**ມາດຕາ 15 ສິດ ແລະ ໜ້າທີ່ຂອງສະພາບໍລິຫານກອງທຶນ**

ສະພາບໍລິຫານກອງທຶນຂັ້ນແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນໄພພິບັດ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ, ລະບຽບການຂອງກອງທຶນ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ;
2. ຄົ້ນຄວ້າແຜນການ ແລະ ແຜນງົບປະມານ ການເຄື່ອນໄຫວປະຈຳປີ ຂອງກອງທຶນ ເພື່ອນຳສະເໜີຕໍ່ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ຕົກລົງ ແລະ ຮັບຮອງເອົາ;
3. ລະດົມຂົນຂວາຍ, ຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນໃຫ້ກອງທຶນ;
4. ຄົ້ນຄວ້າ ແລະ ສ້າງລະບຽບການກ່ຽວກັບການຄຸ້ມຄອງ, ນຳໃຊ້ກອງທຶນໄພພິບັດ;
5. ສະເໜີ ແຕ່ງຕັ້ງ ຫຼື ປົດຕຳແໜ່ງບຸກຄະລາກອນຂອງກອງເລຂາກອງທຶນ;
6. ຕິດຕາມ, ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;
7. ສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ໃຫ້ຄະນະກາມະການຄຸ້ມຄອງໄພພິບັດ ທຸກເດືອນ ແລະ ໜຶ່ງປີ;
8. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ ແລະ ຕາມການມອບໝາຍຂອງຄະນະກຳມະການຄຸ້ມຄອງໄພພິບັດ.

**ມາດຕາ 16 ກອງປະຊຸມສະພາບໍລິຫານກອງທຶນ.**

ກອງປະຊຸມສາມັນ ຂອງສະພາບໍລິຫານກອງທຶນ ຈັດຂຶ້ນປີລະສອງເທື່ອ ໃນກໍລະນີມີບັນຫາສຳຄັນທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງດ່ວນ ກໍສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມ

ການຮຽກປະຊຸມຂອງປະທານສະພາບໍລິຫານກອງທຶນ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານກອງທຶນແຕ່ສອງຄົນຂຶ້ນໄປ, ກອງປະຊຸມຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານກອງທຶນເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ.

**ມາດຕາ 17 ກອງເລຂາສະພາບໍລິຫານກອງທຶນ**

ກອງເລຂາ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າໜຶ່ງ ຫາ ສອງຄົນ ແລະ ວິຊາການຈຳນວນໜຶ່ງທີ່ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການຄຸ້ມຄອງໄພພິບັດ ຕາມການສະເໜີ ຂອງປະທານສະພາບໍລິຫານກອງທຶນ, ຊຶ່ງມີອາຍຸການຫ້າປີ ແລະ ສາມາດແຕ່ງຕັ້ງຄືນໃໝ່ອີກ.

ກອງເລຂາ ມີຄວາມຮັບຜິດຊອບໂດຍກົງຕໍ່ສະພາບໍລິຫານກ່ຽວກັບວຽກງານຄຸ້ມຄອງບໍລິຫານກອງທຶນ, ຮອງຫົວໜ້າກອງເລຂາເປັນຜູ້ຊ່ວຍ ຫົວໜ້າກອງເລຂາ ແລະ ມີໜ້າທີ່ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງຫົວໜ້າກອງເລຂາ.

**ມາດຕາ 18 ສິດ ແລະ ໜ້າທີ່ຂອງກອງເລຂາສະພາບໍລິຫານກອງທຶນ**

ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂຶ້ນແຜນງານ, ໂຄງການ, ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະ ລະດົມທຶນເຂົ້າກອງທຶນປະຈຳທຸກເດືອນ ແລະ ປະຈຳປີ ສະເໜີຕໍ່ສະພາບໍລິຫານ ເພື່ອພິຈາລະນາຮັບຮອງເອົາ ແລະ ສະເໜີຄະນະກຳມະການຄຸ້ມຄອງໄພພິບັດອະນຸມັດ;
2. ສ້າງລະບຽບພາຍໃນຂອງກອງທຶນ ເພື່ອສະເໜີຕໍ່ສະພາບໍລິຫານກອງທຶນ;
3. ຄຸ້ມຄອງບໍລິຫານການເຄື່ອນໄຫວວຽກງານປະຈຳວັນຂອງກອງທຶນໂດຍສອດຄ່ອງກັບແຜນການດ້ວຍຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;
4. ຈັດຕັ້ງກິດຈະກຳຊອກຫາແຫຼ່ງທຶນເພື່ອລະດົມທຶນເຂົ້າກອງທຶນ;
5. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກຂອງກອງທຶນ;
6. ເບີກຈ່າຍເງິນ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການຂອງສະພາບໍລິຫານກອງທຶນໄດ້ຮັບຮອງ;
7. ຕິດຕາມ, ກວດກາປະເມີນຜົນການນຳໃຊ້ກອງທຶນ;
8. ສະຫຼຸບ ແລະ ລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນຕໍ່ສະພາບໍລິຫານ ແລະ ຄະນະກຳມະການຄຸ້ມຄອງໄພພິບັດຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງສະພາບໍລິຫານ ແລະ ຄະນະກຳມະການຄຸ້ມຄອງໄພພິບັດ.

**ມາດຕາ 19 ບັນຊີຂອງກອງທຶນ**

ກອງທຶນໄພພິບັດ ມີລະບົບບັນຊີທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍ ການບັນຊີ ແລະ ເປີດບັນຊີເງິນຝາກຢູ່ ຄັງເງິນແຫ່ງຊາດປະຈຳແຂວງ ຫຼື ຢູ່ທະນາຄານທຸລະກິດທີ່ມີຄວາມໝັ້ນຄົງ ແລະ ເຊື່ອຖືໄດ້ຢູ່ ສປປ ລາວ ຕາມການຕົກລົງຂອງສະພາບໍລິຫານກອງທຶນ.

**ມາດຕາ 20 ການກວດສອບບັນຊີ**

ກອງທຶນໄພພິບັດໄດ້ຮັບການກວດສອບຕາມລະບົບບັນຊີ ປົກກະຕິ, ຜົນການກວດສອບຕ້ອງລາຍງານໃຫ້ປະທານຄະນະກຳມະການຄຸ້ມຄອງໄພພິບັດ ແລະ ຖືກພິມເຜີຍແຜ່ໃຫ້ສາທາລະນະຊົນຮັບຊາບ ຕາມການຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງໄພພິບັດ.

**ມາດຕາ 21 ການລາຍງານ**

ກອງເລຂາກອງທຶນຕ້ອງສົ່ງບົດລາຍງານການເຄື່ອນໄຫວຂອງກອງທຶນໃຫ້ປະທານສະພາບໍລິຫານກອງທຶນໃນ ທຸກໆ 3 ເດືອນ ແລະ ລາຍງານໃຫ້ສະພາບໍລິຫານຢ່າງເປັນປົກກະຕິ ( 6 ເດືອນ ແລະ 1 ປີ), ໃນກໍລະນີຮີບດ່ວນແມ່ນລາຍງານໃຫ້ປະທານຮັບຊາບດ່ວນ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 22 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ທຳລາຍ ຫຼື ປ່ຽນແປງ ສະພາບທຳມະຊາດ ແລະ ສິ່ງແວດລ້ອມ ທີ່ຈະພາໃຫ້ເກີດໄພພິບັດ;
2. ສວຍໂອກາດກັກຕຸນ, ຂຶ້ນລາຄາສິນຄ້າ ແລະ ຄ່າຂົນສົ່ງໂດຍສານ;
3. ສວຍໂອກາດຮັບການບໍລິຈາກດ້ວຍຮູບການຕ່າງໆ;
4. ລະດົມທຶນການບໍລິຈາກ ໂດຍບໍ່ໄດ້ຮັບອະນຸຍາດ;
5. ໃຊ້ຄວາມຮຸນແຮງ, ທຳລາຍ, ລັກຊັບສິນຂອງກອງທຶນ;
6. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ຄວາມຮ່ວມມື ໃນການສ້າງກອງທຶນ;
7. ເຜີຍແຜ່, ລາຍງານ ຫຼື ໃຫ້ຂໍ້ມູນບໍ່ຖືກຕ້ອງຕາມຄວາມເປັນຈິງ;
8. ໃຫ້ ຫຼື ຮັບສິນບົນ, ສໍ້ໂກງ, ຍັກຍອກຊັບສິນຂອງກອງທຶນ;
9. ໂຄສະນາໃສ່ຮ້າຍປ້າຍສີການຈັດຕັ້ງ ແລະ ພະນັກງານຂອງລັດ;
10. ບໍລິຈາກເຄື່ອງອຸປະໂພກ-ບໍລິໂພກ, ຊັບສິນ ລວມທັງຢາປົວພະຍາດ ທີ່ໝົດອາຍຸການນຳໃຊ້ ແລະ ບໍ່ສາມາດນຳໃຊ້ໄດ້;
11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 23 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ-ລັດຖະກອນ**

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານ-ລັດຖະກອນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ອານາດ, ໜ້າທີ່, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດໃຫ້ແກ່ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບເອົາສິນບົນ, ຈາກບຸກຄົນ ຫຼື ການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່;
4. ກົດໜ່ວງ, ຖ່ວງດຶງເອກະສານ, ໃນການແກ້ໄຂບັນຫາຕ່າງໆກ່ຽວກັບກອງທຶນໄພພິບັດ;
5. ຮຽກເອົາຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ປອມແປງເອກະສານ ຫຼື ອອກເອກະສານບໍ່ຖືກຕ້ອງ ແລະ ທຳລາຍເອກະສານ;

7. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
8. ເພີ່ມ ຫຼື ຫຼຸດ ອັດຕາຄ່າຊ່ວຍເຫຼືອ ນໍາໃຊ້ລາຍຮັບຈາກກອງທຶນໄພພິບັດ ຕາມລໍາພັງໃຈ;
9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 24 ຂໍ້ຫ້າມສໍາລັບ ຜູ້ປະສົບໄພພິບັດ

ຫ້າມຜູ້ປະສົບໄພພິບັດ ມີພຶດຕິກໍາ ດັ່ງນີ້:

1. ລາຍງານຄວາມເສຍຫາຍ ຂອງຕົນ ແລະ ຄອບຄົວ ໂດຍບໍ່ມີມູນຄວາມຈິງ;
2. ໃຫ້ຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງ;
3. ທໍາລາຍ, ເຄື່ອນຍ້າຍຫຼັກຖານ ຫຼື ປອມແປງເອກະສານ ເພື່ອຈຸດປະສົງຂໍການຊ່ວຍເຫຼືອ;
4. ຍົກຍ້າຍຈາກບ່ອນອາໄສທີ່ໄດ້ຈັດສັນໃຫ້ ໂດຍບໍ່ໄດ້ຮັບອະນຸຍາດ;
5. ສ້າງຄວາມຫຍຸ້ງຍາກ ແລະ ຄວາມປັ່ນປ່ວນຢູ່ສະຖານທີ່ພັກເຊົາຊົ່ວຄາວ;
6. ລະເມີດແຈ້ງການ, ຄໍາແນະນໍາ ຂອງຄະນະກໍາມະການຄຸ້ມຄອງໄພພິບັດ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
7. ສວຍໂອກາດລັກລອບເອົາຊັບສິນຂອງຜູ້ປະສົບໄພພິບັດດ້ວຍກັນ;
8. ມີພຶດຕິກໍາອື່ນທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 5
## ອົງການຄຸ້ມຄອງ ແລະ ການກວດກາກອງທຶນ

### ມາດຕາ 25 ອົງການຄຸ້ມຄອງກອງທຶນໄພພິບັດ

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງ ວຽກງານກອງທຶນໄພພິບັດພາຍໃນແຂວງ ຢ່າງລວມສູນ ໂດຍມອບໃຫ້ ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນແຂວງ ແລະ ສະພາບໍລິຫານກອງທຶນ ເປັນຜູ້ຄຸ້ມຄອງໂດຍກົງ ແລະ ຖືເອົາພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນໃຈກາງໃນການປະສານລະຫວ່າງພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ.

### ມາດຕາ 26 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງກອງທຶນໄພພິບັດ

ອົງການຄຸ້ມຄອງກອງທຶນໄພພິບັດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ, ແຜນການ ແລະ ໂຄງການກ່ຽວກັບ ການຄຸ້ມຄອງກອງທຶນໄພພິບັດ;
2. ໂຄສະນາເຜີຍແຜ່ນະໂຍບາຍ, ຍຸດທະສາດ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບການຄຸ້ມຄອງກອງທຶນໄພພິບັດພ້ອມທັງປຸກຈິດສໍານຶກໃຫ້ທົ່ວປວງຊົນຮັບຮູ້ ແລະ ເຂົ້າໃຈ.

### ມາດຕາ 27 ອົງການກວດກາກອງທຶນໄພພິບັດ

ອົງການກວດກາກອງທຶນໄພພິບັດ ປະກອບມີ:

1. ອົງການກວດກາພາຍໃນ: ແມ່ນອົງການດຽວກັນກັບອົງການຄຸ້ມຄອງຕາມມາດຕາ 25 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກປະກອບດ້ວຍ: ສະພາປະຊາຊົນແຂວງ, ອົງການກວດກາສອບ, ອົງການກວດກາລັດຂັ້ນແຂວງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ;

**ມາດຕາ 28 ເນື້ອໃນການກວດກາ**

ການກວດກາກອງທຶນໄພພິບັດມີເນື້ອໃນດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ມາດຕະການ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ສະບັບນີ້;
2. ກວດກາການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກສ່ວນຕ່າງໆທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ກວດກາຄວາມຮັບຜິດຊອບຂອງອົງການຄຸ້ມຄອງ ແລະ ກວດກາການຄຸ້ມຄອງກອງທຶນໄພພິບັດ;
4. ກວດກາຕາມການສະເໜີ, ການຮ້ອງຂໍຂອງປະຊາຊົນຕໍ່ກັບພຶດຕິກຳຂອງພະນັກງານຄຸ້ມຄອງກອງທຶນໄພພິບັດ ທີ່ຂາດຄວາມສະເໝີພາບ, ຂາດຄວາມຍຸຕິທຳ ແລະ ຂາດຄວາມໂປ່ງໃສ.

**ມາດຕາ 29 ຮູບແບບການກວດກາ**

ຮູບແບບການກວດກາມີດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາ ທີ່ແນ່ນອນ;
2. ການກວດກາໂດຍໄດ້ແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າໃນເວລາອັນແນ່ນອນ;
3. ການກວດກາແບບກະທັນຫັນ ແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງລ່ວງໜ້າໃຫ້ຜູ້ຖືກກວດກາຮັບຊາບກ່ອນ;

ໃນເວລາດຳເນີນການເຄື່ອນໄຫວຕິດຕາມກວດກາຕ້ອງປະຕິບັດຢ່າງເຂັ້ມງວດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັນທະ ແລະ ປະກອບສ່ວນດ້ວຍຄວາມສະໝັກໃຈ ເຂົ້າໃນກອງທຶນໄພພິບັດ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການຢ່າງເໝາະສົມ.

**ມາດຕາ 31 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ລົງວິໄນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 32 ຕາປະທັບ**

ກອງທຶນໄພພິບັດ ແມ່ນມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 33 ການຈັດຕັ້ງປະຕິບັດ**

ສະພາບໍລິຫານກອງທຶນ ແລະ ກອງເລຂາຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບການເຄື່ອນໄຫວຮອບດ້ານຂອງກອງທຶນໄພພິບັດ ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ຢ່າງໜ້ອຍປີລະສອງຄັ້ງ.

ບັນດາພະແນກການ, ອົງການປົກຄອງທຸກຂັ້ນ, ພົນລະເມືອງທຸກຄົນ ພາຍໃນແຂວງ ສະຫວັນນະເຂດ ຈົ່ງຮັບຮູ້ ແລະ ມີພັນທະ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 34 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນທີ່ໄດ້ລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງສະຫວັນນະເຂດ ເຈົ້າແຂວງ

ບຸນໂຈມ ອຸບົນປະເສີດ